# ທ່ານໄດ້ຮູ້ແລ້ວບໍ່...

ກ່ຽວກັບການບໍຣິການແລະການອູ້ມຊູຕ່າງໆຢູ່ລຸ່ມນີ້

## ສຳຣັບປູ່ຍ່າ/ພໍ່ເຖົ້າແມ່ເຖົ້າແລະຍາດພີ່ນ້ອງທີ່ລ້ຽງດູເດັກທັງຫລາຍ?



## ບໍ່ແມ່ນແຕ່ທ່ານຜູ້ດຽວ!

ມີຫລາຍກວ່າຈຳນວນ 35,000 ປູ່ຍ່າ/ພໍ່ເຖົ້າແມ່ເຖົ້າແລະຍາດພີ່ນ້ອງທັງຫລາຍທີ່ລ້ຽງດູເດັກທັງຫລາຍໃນຣັດວໍຊິງຕັນ. ບັນຊີຢູ່ລຸ່ມນີ້ແມ່ນແຫລ່ງຊ່ວຍເຫລືອຕ່າງໆ, ຜົນປະໂຫຍດການຊ່ວຍເຫລືອທັງຫລາຍ, ແລະການບໍຣິການອູ້ມຊູຕ່າງໆທີ່ໄວ້ໃຫ້ທ່ານໂດຍຜ່ານກົມສັງຄົມສົງເຄາະແລະສາທາຣະນະສຸກ (DSHS) ແລະອົງການອື່ນໆ.

## ທ່ານແລະເດັກທີ່ຢູ່ໃນການດູແລຂອງທ່ານອາດມີເງື່ອນໄຂເໝາະສົມຕໍ່...

ການສືບຕໍ່ໄດ້ຮັບການຊ່ວຍເຫລືອດ້ານການເງິນ ໂດຍຜ່ານແຜນ TANF (ການຊ່ວຍເຫລືອຊົ່ວຄາວແກ່ຄອບຄົວທີ່ຕ້ອງການຈຳເປັນ) ງົບປະມານໃຫ້ແກ່ເດັກທໍ່ນັ້ນ. ຣາຍໄດ້ຂອງເດັກທໍ່ນັ້ນແລະຈຳນວນຕົວເລກແຫລ່ງຣາຍໄດ້ຂອງເດັກທໍ່ນັ້ນທີ່ນຳມາເປັນຂໍ້ຕັດສິນຄວາມມີເງື່ອນໄຂ. ເພື່ອຂ່າວຂໍ້ມູນຣາຍລະອຽດເພີ້ມ, ໃຫ້ເປີດໄປຫາ **https://wws2.wa.gov/dshs/onlinecso/non_needy_relative_grant.asp**. ເພື່ອຂໍເອົາ, ໃຫ້ຕິດຕໍ່ຫາຫ້ອງການບໍຣິການຊຸມຊົນເຂດທ້ອງຖິ່ນ (CSO) ຂອງທ່ານ ຫລືຂໍຮ້ອງເອົາໂດຍຜ່ານທາງສາຍທໍຣະຄົມທີ່ **http://onlineapp.dshs.wa.gov**. ໃຫ້ໂທ 1-800-865-7801 ເພື່ອຮູ້ຫາສະຖານທີ່ຫ້ອງການບໍຣິການຊຸມຊົນເຂດທ້ອງຖິ່ນ (CSO) ຂອງທ່ານ. ຜູ້ໄດ້ຮັບເງິນຕາມແຜນ TANF ສຳຣັບຊ່ວຍເດັກທໍ່ນັ້ນ ສາມາດໄດ້ຮັບເງິນສົດເທື່ອດຽວ ເພື່ອຊ່ວຍສະເພາະບ່ອນຢູ່ອາໃສຫລືຄ່ານ້ຳຄ່າໄຟທີ່ຕ້ອງການຈຳເປັນຍາມສຸກເສີນ ໂດຍຜ່ານໂຄງການຄວາມຮຽກຮ້ອງເພີ້ມເຕີມຕໍ່ຄວາມຕ້ອງການຈຳເປັນທີ່ສຸກເສີນຕ່າງໆ (AREN).

ການຊ່ວຍເຫລືອດ້ານການພະຍາບານສຸຂະພາບ (ຍັງເປັນທີ່ເຂົ້າໃຈວ່າ ເມດິເຄດ ຫລືບັດພະຍາບານຕ່າງໆ) ເພື່ອຄຸ້ມກັນການພະຍາບານສຸຂະພາບ, ປົວແຂ້ວ, ແລະຄ່າໃຊ້ຈ່າຍຕ່າງໆດ້ານສຸຂະພາບຈິດ. ເດັກທັງຫລາຍທີ່ຢູ່ໃນການລ້ຽງດູຈາກຍາດພີ່ນ້ອງອາດໄດ້ຮັບການຊ່ວຍເຫລືອດ້ານພະຍາບານສຸຂະພາບໂດຍບໍ່ຕ້ອງໄດ້ຜ່ານການໄດ້ຮັບເງິນສົດຈາກແຜນ TANF ສຳຣັບຊ່ວຍເດັກທໍ່ນັ້ນ. ເພື່ອຮ້ອງຂໍເອົາ, ໃຫ້ຕິດຕໍ່ຫາຫ້ອງການບໍຣິການຊຸມຊົນເຂດທ້ອງຖິ່ນ (CSO) ຂອງທ່ານ ຫລືຖອນເອົາຄຳຮ້ອງທີ່ **http://www1.dshs.wa.gov/pdf/ms/forms/14_380.pdf**.

ຄວາມສຸກເສີນ, ການອູ້ມຊູໄລຍະສັ້ນແກ່ຍາດຜູ້ລ້ຽງດູເດັກທີ່ບໍ່ມີໃບລາຍເຊັນທັງຫລາຍໂດຍຜ່ານການບໍຣິການອູ້ມຊູຍາດພີ່ນ້ອງ. ທຶນຊ່ວຍເຫລືອເຫລົ່ານີ້ສຳຣັບເດັກທີ່ຖືກຈັດສັນບ່ອນຢູ່ໃຫ້ໂດຍພະແນກບໍຣິການເດັກແລະຄອບຄົວທັງຫລາຍ (DCFS) ແລະເພື່ອອຳນວຍຄວາມສະດວກແລະສືບຕໍ່ຮັກສາການຈັດສັນບ່ອນຢູ່ຂອງ DCFS. ເງິນທຶນຊ່ວຍເຫລືອອາດຈ່າຍຄ່າເຄື່ອງເຟີນິເຈີ, ເຄື່ອງນຸ່ງຫົ່ມ, ອຸປະກອນໂຮງຮຽນ, ເປັນຕົ້ນ. ໃຫ້ຕິດຕໍ່ກັບພະນັກງານບໍຣິການ DCFS ຂອງທ່ານ.

ໂຄງການອູ້ມຊູໄລຍະສັ້ນແກ່ຍາດຜູ້ໃກ້ສິດທີ່ໃຫ້ການລ້ຽງດູ. ເງິນທຶນຊ່ວຍເຫລືອຍາດພີ່ນ້ອງທີ່ໃກ້ສິດຜູ້ບໍ່ກ່ຽວຂ້ອງກັບຣະບົບຄວາມສະວັດດີພາບຂອງເດັກແລະສາມາດໃຊ້ຈ່າຍຊື້ອາຫານ, ຄ່າບ່ອນຢູ່ອາໃສ, ເຄື່ອງນຸ່ງຫົ່ມ, ອຸປະກອນໂຮງຮຽນ, ການບໍຣິການດ້ານກົດໝາຍ, ເປັນຕົ້ນ. ເພື່ອຂ່າວຂໍ້ມູນເພີ້ມເຕີມ, ໃຫ້ຕິດຕໍ່ຫາຫ້ອງການຊ່ວຍເຫລືອຫ້ອງການຂ່າວເພື່ອຜູ້ອາວຸໂສແລະການຊ່ວຍເຫລືອຂອງທ່ານ. ເພື່ອຮູ້ຫາສະຖານທີ່ຫ້ອງການ, ໃຫ້ໂທຫາຫ້ອງການປົກຄອງບໍຣິການບໍຣິການຜູ້ອາວຸໂສ ແລະພິການທີ່ເລກໂທ 1-800-422-3263 ຫລືເປີດເບິ່ງ **http://www.adsa.dshs.wa.gov/Resources/clickmap.htm**.

ການຊ່ວຍເຫລືອຝາກເດັກໂດຍຜ່ານໂຄງການປະສານງານການເຮັດວຽກແລະການຝາກເດັກ (WCCC). ຜູ້ໃຫ້ການດູແລທີ່ເປັນຍາດພີ່ນ້ອງ, ເຊັ່ນຜົວເມັຽ, ສາມາດມີຄຸນສົມບັດຕໍ່ໂຄງການ WCCC ເຖິງແມ່ນວ່າມີແຕ່ຜູ້ດຽວທໍ່ນັ້ນເຮັດການ. ເພື່ອໂຄງການແລະຂ່າວຂໍ້ມູນໃນການຂໍຮ້ອງ, ໃຫ້ເປີດຫາທີ່ **https://wws2.wa.gov/dshs/onlinecso/WCCC.asp** ຫລືຕິດຕໍ່ຫ້ອງການບໍຣິການຊຸມຊົນຂອງທ່ານໂດຍສ່ວນຕົວຫລືທາງໂທຣະສັບ.

ພະແນກລ້ຽງເດັກແລະການຮຽນແຕ່ຫົວທີຂອງກົມ DSHS ກໍ່ຍັງເປີດໂຄງການໆຝາກເດັກຍາມລະດູການສຳລັບພະນັກງານກະເສດຕະກອນ ແລະ ໂຄງການຝາກເດັກສຳລັບຜູ້ຂາດທີ່ຢູ່ອາໃສແກ່ຄອບຄົວທີ່ບໍ່ມີບ່ອນຢູ່ໄລຍະຊົ່ວຄາວ (ເຊັ່ນອາໃສຢູ່ຕາມທີ່ພັກເຊົາ, ໃນຣົດ, ໃນຜ້າເຕັ້ນ, ໃນສວນສາທາຣະນະ, ເຮືອນໃຫ້ຢູ່ໄລຍະການປ່ຽນແປງ, ຫລືຢູ່ຊົ່ວຄາວກັບຄອບຄົວຫລືໝູ່ຄູ່ທັງຫລາຍໃດໜຶ່ງ). ສຳຣັບຂ່າວຂໍ້ມູນຂອງໂຄງການ, ໃຫ້ເປີດເບິ່ງ **http://www1.dshs.wa.gov/esa/dccel/parents.shtml**. ສຳຣັບຂ່າວຂໍ້ມູນເຣື່ອງໂຄງການເດັກຂາດທີ່ຢູ່ອາໃສ, ທ່ານກໍ່ຍັງສາມາດຕິດຕໍ່ຫາທ່ານ Denise Halloran ທີ່ 360-725-4683.

ໂຄງການຊ່ວຍບຳຣຸງອາຫານພິເສດ ໂດຍຜ່ານໂຄງການສຸຂະພາບເພື່ອຜູ້ຍິງ, ເດັກອ່ອນ, ແລະເດັກນ້ອຍເຍົາໄວ (WIC). ພາຍໃຕ້ໂຄງການ WIC ນີ້ແມ່ນຮັບເດັກທີ່ມີຣາຍໄດ້ເໝາະສົມແລະມີການສ່ຽງໄພຕໍ່ການຂາດທາດອາຫານບຳຣຸງ. ສຳຣັບຂ່າວຂໍ້ມູນເຣື່ອງໂຄງການ WIC ທ່ານກໍ່ຍັງສາມາດຕິດຕໍ່ຫາ 1-800-841-1410 ຫລື **http://www.doh.wa.gov/cfh/WIC/default.htm**.

ຄາບອາຫານຕ່າງໆທີ່ຟຣີຫລືລຸດຣາຄາ ໂດຍຜ່ານໂຄງການຕ່າງໆ ເຣື່ອງອາຫານທ່ຽງໂຮງຮຽນ/ອາຫານເຊົ້າໂຮງຮຽນຂອງຊາດ ແລະໂຄງການອາຫານດູແລເດັກແລະຜູ້ໃຫຍ່ (CACFP). ໂຄງການ CACFP ລ້ຽງອາຫານເຊົ້າ, ອາຫານທ່ຽງ, ແລະອາຫານເບົາໃນໂຄງການດູແລເດັກ ຕອນກ່ອນ ຫລື ຫລັງຈາກໂຮງຮຽນຕາມໂຮງຮຽນຣັດ ຫລື ໂຮງຮຽນເອກະຊົນທັງຫລາຍ. ເພື່ອຂ່າວຂໍ້ມູນເພີ່ມ, ໃຫ້ຕິດຕໍ່ໂຮງຮຽນຕາມທ້ອງຖິ່ນຂອງທ່ານ, ຫລື ຫ້ອງການຜູ້ວ່າການໆສຶກສາສາທາຣະນະທີ່ 360-725-6200 ຫລື **http://www.k12.wa.us/childnutrition**.

ການບໍຣິການຕ່າງໆໃນການສວມບາດກ້າວເຂົ້າຮ່ວມຕອນຫົວທີ ໂດຍຜ່ານໂຄງການການເຂົ້າຮ່ວມຫົວທີແກ່ເດັກອ່ອນເດັກເຍົາຂອງຣັດວໍຊິງຕັນ (ITEIP). ຖ້າທ່ານຫາກລ້ຽງດູເດັກທີ່ເປັນພິການຫລືມີຄວາມຂ້ອງໃຈເຣື່ອງການວິວັດທະນາການຂອງເດັກ, ແຕ່ຕອນເກີດເຖິງອາຍຸສາມປີ, ໃຫ້ໂທ ສຸຂະພາບສົມບູນເພື່ອແມ່/ສຸຂະພາບສົມບູນເພື່ອເດັກທີ່ 1-800-322-2588 (ສາຍ TTY 711). ໃຫ້ຖາມຫາຊື່ຂອງຜູ້ປະສານງານແຫລ່ງຊ່ວຍເຫລືອຄອບຄົວ (FRC) ຕາມເຂດຊຸມຊົນໃນທ້ອງຖິ່ນຂອງທ່ານ. FRC ຈະຊ່ວຍທ່ານຄົ້ນຄວ້າເບິ່ງວ່າເດັກທີ່ທ່ານໃຫ້ຄວາມດູແລນັ້ນຈະມີເງື່ອນໄຂໄດ້ຮັບການບໍຣິການຈາກແຜນມີສ່ວນເຂົ້າຮ່ວມຫົວທີນັ້ນຫລືບໍ່. ເພື່ອຂ່າວຂໍ້ມູນເພີ່ມ, ໃຫ້ຕິດຕໍ່ ITEIP ທີ່ 360-725-3500 ຫລື **http://www1.dshs.wa.gov/iteip**.

ການບໍຣິການຕ່າງໆສຳຣັບຜູ້ທີ່ກວດເຫັນອາການມີຄວາມພິການດ້ານການວິວັດທະນາການແລະ/ຫລືຊັກຊ້າ ໂດຍຜ່ານພະແນກພິການດ້ານການວິວັດທະນາການຕ່າງໆ (DDD) ຂອງກົມ DSHS. ການບໍຣິການແລະອູ້ມຊູຕ່າງໆຂອງພະແນກ DDD ຖືຕາມຄວາມພໍໃຈ, ຄວາມສາມາດ, ແລະຄວາມຕ້ອງຈຳເປັນຕ່າງໆສຳຣັບບຸກຄົນ, ແລະການຊຸກຍູ້ກິດຈະກັມປະຈຳວັນຕ່າງໆ, ວຽກປະຈຳວັນ, ແລະຄວາມສຳພັນທັມມະດາຂອງບຸກຄົນຕໍ່ປະຊາຊົນທົ່ວໄປ. ເພື່ອຂ່າວຂໍ້ມູນເພີ່ມເຕີມ, ໃຫ້ເບິ່ງແວບໄຊທ໌ຂອງພະແນກ DDD ທີ່ **http://www1.dshs.wa.gov/ddd/index.shtml**. ເລກໂທຣະສັບຟຣີສຳຣັບຫ້ອງການທ້ອງຖິ່ນຂອງ DDD ສາມາດຫາເອົາໄດ້ທີ່ **http://www1.dshs.wa.gov/ddd/contacts.shtml**.

ການບໍຣິການປິ່ນປົວການເສບຕິດສານເຄມີ ໂດຍຜ່ານພະແນກພິດພົນຮ້າຍຈາກການຕິດເຫລົ້າແລະຢາເສບຕິດ (DASA) ຂອງກົມ DSHS. ການບໍຣິການຕ່າງໆຂອງພະແນກ DASA ອາດໃຊ້ຈ່າຍດ້ວຍບັດພະຍາບານໄດ້ ແລະພະແນກ DASA ກໍ່ຍັງມີເງິນທຶນຊ່ວຍເຫລືອ "ຍາມຂັດສົນ" ທີ່ສາມາດຊ່ວຍຜູ້ໃຫ້ການດູແລໃນການທ່ອງທ່ຽວເດີນທາງແລະອາຫານບ່ອນພັກເຊົາຕອນເດັກຊາວໜຸ່ມຫາກໄດ້ຮັບການປິ່ນປົວ. ການບໍຣິການປິ່ນປົວຍັງມີໃຫ້ຜູ້ໃຫຍ່ທັງຫລາຍທີ່ເໝາະສົມຕາມເງື່ອນໄຂຣາຍໄດ້. ເພື່ອຂ່າວຂໍ້ມູນເພີ່ມແລະການຂໍເອົາການບໍຣິການຊ່ວຍເຫລືອນັ້ນ, ໃຫ້ຕິດຕໍ່ສາຍຊ່ວຍເຫລືອຜູ້ຕິດເຫລົ້າ/ຢາເສບຕິດຕຣອດ 24 ຊົ່ວໂມງທີ່ 1-800-562-1240.

ການສ້າງຕັ້ງສະພາບຄວາມເປັນພໍ່ແມ່ໂດຍຜ່ານພະແນກເກັບເງິນລ້ຽງເດັກ (DCS). ການສ້າງຕັ້ງຖານະຄວາມເປັນພໍ່ແມ່ ສ້າງຄວາມສຳພັນທາງກົດໝາຍຣະຫວ່າງພໍ່ແລະເດັກ, ຊຶ່ງສາມາດຊ່ວຍໃຫ້ປະວັດການພະຍາບານໃນຄອບຄົວແລະຄວາມເໝາະສົມສຳຣັບການປະກັນສັງຄົມຫລືຜົນປະໂຫຍດຄວາມເປັນຜູ້ເພິ່ງພາສຳຣັບເດັກ. ນີ້ຍັງອາດສາມາດຊ່ວຍພໍ່ແມ່ຂອງເດັກອີກຍ້ອນວ່າຜົນປະໂຫຍດຕ່າງໆຂອງຄວາມເປັນຜູ້ເພິ່ງພາທີ່ຈ່າຍອອກໃຫ້ຕາງໜ້າຜູ້ເປັນພໍ່ແມ່ນັ້ນຖືເປັນຄະແນນດີໃນຈຳນວນເງິນເບັ້ຽລ້ຽງເດັກ. ໃຫ້ເບິ່ງຢູ່ລຸ່ມນີ້ສຳຣັບຂ່າວຂໍ້ມູນໃນການຕິດຕໍ່ຫາ.

ຫ້ອງການບັງຄັບເກັບເງິນລ້ຽງເດັກໂດຍຜ່ານພະແນກເກັບເງິນລ້ຽງເດັກ (DCS) ຂອງກົມ DSHS. ພະແນກ DCS ຈະບັງຄັບນຳໃຊ້ຄຳສັ່ງລ້ຽງເດັກທີ່ມີຢູ່ແລ້ວນັ້ນ, ເຊັ່ນຄຳຕັດສິນການຢ່າຮ້າງ, ຫລືອາດຈະສ້າງຕັ້ງອອກຄຳສັ່ງລ້ຽງເດັກຖ້າຫາກເປັນສິ່ງຕ້ອງການຈຳເປັນ. ພະແນກ DCS ຈະຕັ້ງຂໍ້ຜູກມັດໃນການອອກເງິນໂດຍຍຶດຖືຕາມຄວາມສາມາດຈ່າຍຂອງພໍ່ແມ່. ພະແນກ DCS ຈະພະຍາຍາມໃຫ້ພໍ່ແມ່ຄຸ້ມກັນສຸຂະພາບແກ່ເດັກໂດຍຜ່ານການປະກັນໄພສຸຂະພາບຂອງເຂົາເຈົ້າ, ຖ້າຫາກມີ.

ເພື່ອຂ່າວຂໍ້ມູນເຣື່ອງການບໍຣິການທັງໝົດຂອງພະແນກ DCS, ໃຫ້ເປີດເບິ່ງແວບໄຊທ໌ທີ່ **http://www1.dshs.wa.gov/dcs/index.shtml** ຫລືໃຫ້ໂທ 1-800-442-KIDS. ທ່ານສາມາດຮ້ອງຂໍເອົາການບໍຣິການຂອງພະແນກ DCS ທັງໆທີ່ທ່ານບໍ່ໄດ້ຮັບເງິນຊ່ວຍເຫລືອຈາກຣັດ. ການໄດ້ຮັບເງິນສົດຊ່ວຍເຫລືອ (TANF) ຫລືການຊ່ວຍເຫລືອດ້ານພະຍາບານ ແມ່ນສະທ້ອນຜົນໃຫ້ມີສຳນວນ DCS ໂດຍອັດຕະໂນມັດໂລດ. ຖ້າທ່ານຫາກຢ້ານວ່າການຮ່ວມມືກັບ DCS ອາດຈະເປັນອັນຕຣາຍແກ່ທ່ານຫລືເດັກ, ໃຫ້ຕິດຕໍ່ຫາຫ້ອງການບໍຣິການຊຸມຊົນໃນເຂດທ້ອງຖິ່ນຂອງທ່ານເພື່ອປຶກສາ "ການມີເຫດຜົນ" ໃນການບໍ່ຮ່ວມ.

# ຂ່າວຂໍ້ມູນເພີ່ມສຳຣັບຍາດພີ່ນ້ອງຜູ້ໃຫ້ການດູແລທັງຫລາຍ...

ເພື່ອພົບພໍ້ "ຜູ້ຄວບຄຸມສາຍສຳພັນທາງສາຍເລືອດ" ຜູ້ທີ່ສາມາດຊ່ວຍຊີ້ບອກທ່ານຫາແຫລ່ງຕ່າງໆໂດຍກົງໃນເຂດທ້ອງຖິ່ນຂອງທ່ານ,ໃຫ້ໂທ 1-800-422-3263 ຫລື ເປີດເບິ່ງແວບໃສທ໌ຍາດພີ່ນ້ອງທີ່ເປັນພໍ່ແມ່ທີ່ **http://parenting.wsu.edu/relative/index.htm**. ໃຫ້ກົດຄຳວ່າ "Support Groups and Kinship Navigators" (ກຸ່ມອູ້ມຊູແລະຜູ້ຄວບຄຸມສາຍສຳພັນທາງສາຍເລືອດ) ແລະແລ້ວໃຫ້ກົດຄຳວ່າ "Find a Support Group or Kinship Navigator in your County" (ຊອກຫາກຸ່ມອູ້ມຊູຫລືຜູ້ຄວບຄຸມສາຍສຳພັນທາງສາຍເລືອດໃນເຂດຄາວຕີ້ຂອງທ່ານ). ໃຫ້ສັງເກດວ່າຜູ້ຄວບຄຸມສາຍສຳພັນທາງສາຍເລືອດນັ້ນບໍ່ໄດ້ບໍຣິການບໍຣິການທຸກບ່ອນໃນຣັດ.

ເພື່ອພົບພໍ້ກຸ່ມອູ້ມຊູໃນເຂດທ້ອງຖິ່ນກັບຍາດພີ່ນ້ອງຜູ້ໃຫ້ການລ້ຽງດູອື່ນ, ເປີດເບິ່ງແວບໃສທ໌ຍາດພີ່ນ້ອງທີ່ເປັນພໍ່ແມ່ທີ່: **http://parenting.wsu.edu/relative/index.htm**. ໃຫ້ກົດຄຳວ່າ "Support Groups and Kinship Navigators" (ກຸ່ມອູ້ມຊູແລະຜູ້ຄວບຄຸມສາຍສຳພັນທາງສາຍເລືອດ) ແລະແລ້ວໃຫ້ກົດຄຳວ່າ "Find a Support Group or Kinship Navigator in your County" (ຊອກຫາກຸ່ມອູ້ມຊູຫລືຜູ້ຄວບຄຸມສາຍສຳພັນທາງສາຍເລືອດໃນເຂດຄາວຕີ້ຂອງທ່ານ).

ເພື່ອຂ່າວຂໍ້ມູນເພີ່ມເຣື່ອງການບໍຣິການຂອງກົມ DSHS, ຮວມທັງຍາດພີ່ນ້ອງທີ່ລ້ຽງດູ, ເປີດເບິ່ງ "ບໍ່ແມ່ນພິດປະຕູ" ທີ່ແວບໃສທ໌: **http://www.dshs.wa.gov/basicneeds**.

ເພື່ອພົບສູນກາງສຸຂະພາບຕ່າງໆທີ່ໃຫ້ການພະຍາບານແລະການປົວແຂ້ວສຳຣັບຜູ້ທີ່ຖືກຄຸ້ມກັນໂດຍເມດິເຄດ ໃຫ້ເປີດເບິ່ງ: **http://www.chs.hca.wa.gov**. ໃຫ້ກົດຄຳວ່າ "Find a CHS contracted clinic in Washington" (ຊອກຫາ CHS ຫ້ອງພະຍາບານທີ່ໄດ້ມີສັນຍາໃນຣັດວໍຊິງຕັນ) ພາຍໃຕ້ "General Information" (ຂ່າວຂໍ້ມູນທົ່ວໄປ) ໃນບັນຊີທີ່ລົງຊື່ນັ້ນມັນຈະບອກເຖິງຫ້ອງພະຍາບານນັ້ນຈະຮັບຄົນໄຂ້ທີ່ມີເມດິຄໍລ໌ ຫລືປົວແຂ້ວ ຫລືທັງສອງຢ່າງ.

ຍາດພີ່ນ້ອງທີ່ໃຫ້ການດູແລດຽວນີ້ອາດໃຫ້ອະນຸຍາດໃຫ້ການພະຍາບານສຳຣັບເມດິຄໍລ໌ພາຍໃຕ້ຂໍ້ກຳນົດໃນຂໍ້ກົດໝາຍທີ່ໃຊ້ແທນຂໍ້ມາດຕຣາ 1281 ທີ່ໄດ້ຜ່ານສະພາຂອງຣັດວໍຊິງຕັນແລະມີຜົນໃຊ້ໄດ້ແຕ່ ເດືອນກໍຣະກະດາ, 2005. ເພື່ອຂ່າວຂໍ້ມູນເພີ່ມເຕີມ, ໃຫ້ໃຫ້ຕິດຕໍ່ກັບສູນກາງຂ່າວດ້ານກົດໝາຍຜູ້ຍິງໃນຣັດວໍຊິງຕັນແລະສາຍສະເໜີສິ່ງຕໍ່ທີ່ 206-621-7691 (ສາຍ TTY 206-521-4317), ມື້ເຮັດການ ຣະຫວ່າງ 9:30 ຕອນເຊົ້າ ແລະບ່າຍ 4:30 ແລະວັນພຸດຣະຫວ່າງ 5:30 ແລະ 7:30 ຕອນແລງ. ຮ່າງໃບຄຳຮ້ອງຕົວຢ່າງຍັງອາດບັນຈຸເອົາຈາກ **www.washingtonlawhelp.org**.

ຖ້າທ່ານມີບັນຫາໃນການຊອກຫາບ່ອນປົວແຂ້ວ ແລະຕ້ອງການຢາກໃຫ້ຊ່ວຍ, ໃຫ້ຕິດຕໍ່ຫາ Connie Mix-Clark (DSHS ແລະ HCA ຜູ້ຈັດການໂຄງການປົວແຂ້ວ) ທີ່ **clarkcl@dshs.wa.gov** ຫລື 360-725-3455 (ທຸກວັນພຸດ) ຫລື 360-923-2753 (ວັນອື່ນໆທັງໝົດ).

ຖ້າທ່ານມີບັນຫາໃນການຊອກຫາບ່ອນປົວສຸຂະພາບຈິດທັງຫລາຍທີ່ຮັບບັດພະຍາບານຂອງຣັດ, ໃຫ້ໂທ 1-888-713-6010 ຫລື ເປີດເບິ່ງ **http://www1.dshs.wa.gov/Mentalhealth/rsnmap.shtml**.

ພໍ່ແມ່ທີ່ຕາງໜ້າພາຍໃນພະແນກສຸກະພາບຈິດຂອງກົມ DSHS ສາມາດຕິດຕໍ່ຫາໄດ້ທີ່ 1-800-446-0259 ຕໍ່ເລກ 3.

ເພື່ອຂ່າວຂໍ້ມູນແລະອູ້ມຊູໃນການລ້ຽງເດັກທີ່ມີບັນຫາດ້ານອາຣົມ, ຄວາມປະພຶດ, ແລະຈິດໃຈ ໃຫ້ຕິດຕໍ່ຫາການກະທຳທົ່ວຣັດໃນການເພື່ອສົ່ງເສີມກຳລັງໃຫ້ຄອບຄົວຂອງຣັດວໍຊິງຕັນ (SAFE WA) ທີ່ 1-866-300-1998.

ເພື່ອຂ່າວຂໍ້ມູນເພີ່ມໃນຣະບົບການດູແລເດັກອະນາຖາແລະສະວັດດີການຂອງເດັກ ເປີດເບິ່ງແວບໄຊທ໌ຂອງຫ້ອງການປົກຄອງເດັກຂອງກົມ DSHS ທີ່ **http://www1.dshs.wa.gov/ca/index.asp**.

ເພື່ອຂ່າວຂໍ້ມູນເພີ່ມໃນແຫລ່ງອາຫານຕ່າງໆໃຫ້ຕິດຕໍ່ຫາສາຍອາຫານເພື່ອຄອບຄົວທົ່ວຣັດໃນເລກ 1-888-436-6392. ສາຍອາຫານເພື່ອຄອບຄົວສາມາດໃຫ້ຂ່າວຂໍ້ມູນເຣື່ອງໂຄງການອາຫານພື້ນຖານຂອງຣັດ, ອາຫານຟຣີຍາມພັກຣະດູຮ້ອນສຳຣັບເດັກ, ສາງອາຫານທ້ອງຖິ່ນ, ໂຄງການຕລາດອາຫານບຳຣຸງຊາວສວນອາວຸໂສ.

ສາຍດ່ວນເຣື່ອງສຸຂະພາບສົມບູນເພື່ອແມ່ແລະເດັກອ່ອນຊ່ວຍໃຫ້ຂໍ້ມູນແລະການສະເໜີສິ່ງຕໍ່ໃນວົງກວ້າງຂອງການບໍຣິການສຸຂະພາບແລະສັງຄົມຕ່າງໆທີ່ພົວພັນກັບການລ້ຽງດູເດັກທຸກອາຍຸຂັ້ນ. ວິຊາທີ່ໜ້າສົນໃຈຕ່າງໆກ່ຽວກັບການໃຫ້ການລ້ຽງດູໂດຍຍາດພີ່ນ້ອງຊຶ່ງຮວມທັງການປະກັນໄພສຸຂະພາບ, ອາຫານບຳຣຸງ, ການສັກຢາກັນໂຣກ, ການຝາກເດັກ, ການວິວັດທະນາການຂອງເດັກ, ເດັກທີ່ມີຄວາມຕ້ອງການພິເສດ, ແລະການອູ້ມຊູພໍ່ແມ່/ອ້າຍເອື້ອຍນ້ອງ. ໃຫ້ໂທ 1-800-322-2588 (ສາຍ TTY 711) ຫລືເປີດເບິ່ງ **http://www.hmhbwa.org**.

ໂອກາດຕ່າງໆໃນການຮຽນຝຶກອົບຮົມ ສຳຣັບຍາດແລະພໍ່ແມ່ບຸນທັມທັງຫລາຍທີ່ປະສົບກັບບັນຫາຄວາມປະພຶດທີ່ໃຫ້ໂດຍສະຖາບັນແຫລ່ງຝຶກອົບຮົມຄອບຄົວ. ໃຫ້ຕິດຕໍ່ຫາຫ້ອງການອອກໃບປັ້ງປືນຜູ້ປະສານງານແຫລ່ງຝຶກອົບຮົມປະຈຳເຂດ ຫລືໃຫ້ເປີດເບິ່ງ **http://fosterparent.dshs.wa.gov**. ແລະໃຫ້ກົດຄຳວ່າ "Ongoing Training" (ການສືບຕໍ່ຝຶກຝົນອົບຮົມ).

# ໃບຂ່າວໂຄສະນາຕ່າງໆທີ່ແຈກໃຫ້ຟຣີ...

ພໍ່ແມ່ທັງຫລາຍທີ່ເປັນຍາດພີ່ນ້ອງ: ແຫລ່ງຄຳແນະນຳຕ່າງໆສຳຣັບຍາດພີ່ນ້ອງທີ່ລ້ຽງດູເດັກທັງຫລາຍໃນຣັດວໍຊິງຕັນ (ກົມ DSHS 22-996x) ເປັນຄຳແນະນຳທົ່ວໄປສຳຣັບຜູ້ໃຫ້ຄວາມລ້ຽງດູທັງໝົດທີ່ເປັນຍາດພີ່ນ້ອງ. ເພື່ອສັ່ງເອົາໃບຂ່າວສານໂຄສະນາຂອງກົມ DSHS, ໃຫ້ເປີດເບິ່ງ: **www.prt.wa.gov** ແລະກົດໃສ່ຄຳທີ່ວ່າ "General Store" (ຮ້ານຄ້າທົ່ວໄປ) ຫລື ໃຫ້ໂທຫາຫ້ອງການພິມແຈກຈ່າຍທີ່ 360-586-6360.

ຂໍ້ແນະນຳແກ່ຜູ້ເປັນຍາດພີ່ນ້ອງເຣື່ອງການບໍຣິການຕ່າງໆເພື່ອຄວາມສະວັດດີພາບຂອງເດັກ (ກົມ DSHS 22-492x) ສຳຣັບສະເພາະຜູ້ລ້ຽງດູທີ່ເປັນຍາດພີ່ນ້ອງທີ່ກ່ຽວຂ້ອງພົວພັນກັບຣະບົບຄວາມສະວັດດີພາບຂອງເດັກ.

ຂໍ້ແນະນຳແກ່ຜູ້ເປັນພໍ່ແມ່ເຣື່ອງຣະບົບສຸຂະພາບຈິດເພື່ອມວນຊົນເປັນປື້ມນ້ອຍແນະນຳທີ່ຂຽນຂຶ້ນໂດຍພໍ່ແມ່ສຳຣັບຜູ້ເປັນພໍ່ແມ່ທັງຫລາຍ.ເພື່ອສັ່ງເອົາ, ໃຫ້ໂທຫາ 1-800-446-0259, ບີບຕໍ່ເລກ 3.

ທາງເລືອກຕ່າງໆສຳຣັບປູ່ຍ່າ/ພໍ່ເຖົ້າແມ່ເຖົ້າແລະຜູ້ໃຫ້ການລ້ຽງດູທັງຫລາຍທີ່ບໍ່ແມ່ນພໍ່ແມ່: ຂໍ້ແນະນຳດ້ານກົດໝາຍສຳຣັບຣັດວໍຊິງຕັນມີໃຫ້ຟຣີແກ່ຍາດພີ່ນ້ອງທີ່ລ້ຽງດູເດັກຊຶ່ງກ່ຽວຂ້ອງພົວພັວກັບສະພາບການດ້ານກົດໝາຍ. ບໍ່ດັ່ງນັ້ນ, ຄຳແນະນຳອາດສັ່ງຊື້ໄດ້ໂດຍໂທຫາສູນກາງກົດໝາຍສຳຣັບຜູ້ຍິງໃນເຂດຕາເວັນຕົກສ່ຽງເໜືອ (Northwest Women's Law Center) ໃນເລກ 206-682-9552.

## ມີຄຳຖາມໃດໆບໍ່?

ຖ້າທ່ານມີຄຳຖາມໃດໆກ່ຽວກັບຂ່າວຂໍ້ມູນນີ້, ກະຣຸນາຕິດຕໍ່ຫາ, Barbara Bofinger, ຫ້ອງການປົກຄອງເດັກ, ທີ່ BOBA300@dshs.wa.gov, (360) 902-7986; Tom Berry, ຫ້ອງວ່າການບໍຣິການເສຖະກິດ ທີ່ berrytj@dshs.wa.gov, (360) 725-4617; ຫລື Hilari Hauptman, ຫ້ອງການປົກຄອງບໍຣິການຜູ້ຊະຣາແລະພິການ ທີ່ haupthp@dshs.wa.gov, 1-800-422-3263.

Find more kinship resources at:
**www1.dshs.wa.gov/kinshipcare**



Washington State
Department of Social & Health Services
DSHS 22-1120 LA (Rev. 9/06)
LAOTIAN